ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງການເງິນ

ກົມພາສີ

ເລກທີ 02572 /ກພສ

ນະຄອນຫລວງວຽງຈັນ, ວັນທີ 07 JAN 2016

## ແຈ້ງການ

*ເຖິງ* : ບັນດາດ່ານພາສີສາກົນ, ກອງກວດກາພາສີນະຄອນຫລວງ ແລະບັນດາແຂວງໃນທົ່ວປະເທດ.

*ເລື່ອງ* : ການຄຸ້ມຄອງການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ ແລະ ເຄິ່ງສຳເລັດ.

- ອີງຕາມກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ ລົງວັນທີ 20/12/2011.
- ອີງຕາມແຈ້ງການຂອງຫ້ອງວ່າການລັດຖະບານ ສະບັບເລກທີ 1360/ຫລບ.ກສສ ລົງວັນທີ 18 ສິງຫາ2015 ແລະ ສະບັບເລກທີ 1732/ຫລບ.ກສສ ລົງວັນທີ 16 ຕຸລາ 2015.
- ອີງຕາມຂໍ້ຕົກລົງຂອງກະຊວງອຸດສະຫະກຳແລະການຄ້າ ສະບັບເລກທີ 2005/ອຄ.ກອຫ ລົງວັນທີ 28 ກັນຍາ 2015 ວ່າດ້ວຍຜະລິດຕະພັນໄມ້.

ຜ່ານມາກົມພາສີ ສັງເກດເຫັນວ່າບັນດາດ່ານພາສີຊາຍແດນ ໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດ ແຈ້ງການ ສະບັບເລກທີ 0403/ກພສ ລົງວັນທີ 26/11/2009 ແລະ ແຈ້ງການເພີ່ມເຕີມ ສະບັບເລກທີ 1324/ກພສ ລົງວັນທີ 23/04/2010 ກ່ຽວກັບການຄຸ້ມຄອງສົ່ງອອກໄມ້ ໄດ້ດີສົມຄວນ ຊຶ່ງສ້າງທ່າແຮງໃນການຄຸ້ມຄອງວຽກງານວິຊາສະເພາະລວມສູນ ໄດ້ຢ່າງເປັນເອກະພາບໃນທົ່ວປະເທດ.

ມາຮອດປະຈຸບັນ ເພື່ອຫລຸດຜ່ອນບັນດາຂັ້ນຕອນທາງດ້ານເອກະສານທາງພາສີ ໃຫ້ມີຄວາມກະທັດລັດ ແລະ ສອດຄ່ອງກັບຂັ້ນຕອນຂອງຂະແໜງການກ່ຽວຂ້ອງ ໂດຍສະເພາະຄຳສັ່ງແນະນຳເພີ່ມເຕີມຂອງກະຊວງອຸດສະຫະກຳ-ການຄ້າ ສະບັບເລກທີ 2156/ອຄ.ກຂອ ລົງວັນທີ 19/10/2015 ໃນການຄຸ້ມຄອງການສົ່ງອອກຜະລິດຕະພັນໄມ້ເຄິ່ງສຳເລັດຮູບ.

**ກົມພາສີ ອອກແຈ້ງການ, ຄື :**

1. ການສົ່ງອອກຜະລິດຕະພັນສຳເລັດຮູບ ທີ່ຈັດຊື້ຕາມງານວາງສະແດງ ຫລື ຮ້ານຈຳໜ່າຍພາຍໃນປະເທດ ເພື່ອສົ່ງອອກໄປຕ່າງປະເທດ ຕ້ອງມີໃບຢັ້ງຢືນຈາກຄະນະຮັບຜິດຊອບງານວາງສະແດງ ຫລື ໃບບິນຂາຍຂອງຂະແໜງສ່ວຍສາອາກອນຄັດຕິດເອກະສານປະກອບໃບແຈ້ງພາສີເປັນລາຍລະອຽດ ທີ່ດ່ານບ່ອນສົ່ງອອກ.

   ສ່ວນການສົ່ງອອກຜະລິດຕະພັນສຳເລັດຮູບ ຂອງບັນດາໂຮງງານຜະລິດປຸງແຕ່ງພາຍໃນປະເທດ ແມ່ນໃຫ້ສືບຕໍ່ຈັດຕັ້ງປະຕິບັດແຈ້ງການສະບັບເລກທີ 0403/ກພສ ລົງວັນທີ 26/11/2009. ການສົ່ງອອກຜະລິດຕະພັນສຳເລັດຮູບ ແມ່ນໄດ້ຮັບການຍົກເວັ້ນຄ່າອາກອນພິເສດຂາອອກ ຕາມລະບຽບການ.

2. ການສົ່ງອອກຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ກົມພາສີ ຈະໄດ້ຢຸດຕິການອອກໜັງສື ຫລື ສະໂນດນຳສົ່ງ ຕາມທີ່ກຳນົດໄວ້ໃນແຈ້ງການເພີ່ມເຕີມ ສະບັບເລກທີ 1324/ກພສ ລົງວັນທີ 23/04/2010, ສະນັ້ນ ມອບຄວາມຮັບຜິດຊອບໃຫ້ດ່ານພາສີສາກົນບ່ອນສົ່ງອອກ ເປັນເຈົ້າການ ຄຸ້ມຄອງກວດກາທາງດ້ານເອກະສານອະນຸຍາດຂອງຂະແໜງການກ່ຽວຂ້ອງ, ແຫລ່ງທີ່ມາຂອງໄມ້ ແລະ ດ້ານຈຳນວນ, ບໍລິມາດ ໃຫ້ສອດຄ່ອງກັບອະນຸຍາດສົ່ງອອກຂອງຂະແໜງການກ່ຽວຂ້ອງ, ເອົາໃຈໃສ່ກວດກາທາງປະເພດ,ຊະນິດ,ຮູບແບບ ແລະ ຂະໜາດຂອງຜະລິດຕະພັນໄມ້ ໃຫ້ຖືກຕ້ອງຕາມຂໍ້ຕົກລົງຂອງກະຊວງອຸດສະຫະກຳ-ການຄ້າ ສະບັບເລກທີ 2005/ອຄ.ກອຫ ລົງວັນທີ 28/09/2015 ວ່າດ້ວຍຜະລິດຕະພັນໄມ້ ຢ່າງເຂັ້ມງວດ.

   ການສົ່ງອອກຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ແມ່ນໃຫ້ຈັດເກັບຄ່າຊັກພິເສດ ຕາມລະບຽບການ.

3. ສ່ວນການສົ່ງອອກໄມ້ທ່ອນ, ໄມ້ຕີຕັບ, ຮາກໄມ້, ຕໍໄມ້ ແລະ ງ່າໄມ້ ແມ່ນສືບຕໍ່ຈັດຕັ້ງປະຕິບັດຕາມແຈ້ງການເພີ່ມເຕີມ ສະບັບເລກທີ 1324/ກພສ ລົງວັນທີ 23/04/2010 ຢ່າງເຂັ້ມງວດ.

4. ມອບໃຫ້ບັນດາພະແນກການກົມພາສີ, ດ່ານພາສີຊາຍແດນ ແລະ ກອງກວດກາພາສີນະຄອນຫລວງແລະບັນດາແຂວງໃນທົ່ວປະເທດ ເອົາໃຈໃສ່ຈັດຕັ້ງປະຕິບັດແຈ້ງການສະບັບນີ້ ໃຫ້ສຳເລັດຜົນ. ຖ້າພົບເຫັນຂໍ້ຫຍຸ້ງຍາກໃຫ້ສັງລວມລາຍງານກົມພາສີ ເພື່ອມີຄຳເຫັນຊີ້ນຳ.

5. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າກົມພາສີ**

ກະຊວງການເງິນ

ກົມພາສີ

**ອາດສະພັງທອງ ສີພັນດອນ**

**Athsaphangthong SIPHANDONE**

<u>ນຳສົ່ງ</u> :

- ທ່ານລັດຖະມົນຕີວ່າການກະຊວງການເງິນ 1 ສະບັບ"ໃຊ້ຕາງລາຍງານ"
- ທ່ານລັດຖະມົນຕີຊ່ວຍວ່າການກະຊວງການເງິນ, ຜູ້ຊີ້ນຳ 1 ສະບັບ "ໃຊ້ຕາງລາຍງານ"
- ກົມການນຳເຂົ້າສົ່ງອອກ, ກະຊວງອຸດສະຫະກຳ-ການຄ້າ 1 ສະບັບ "ເພື່ອປະສານສົມທົບ"
- ບັນດາພະແນກການກົມພາສີ, ພະແນກລະ 1 ສະບັບ "ຈັດຕັ້ງປະຕິບັດ"
- ກອງກວດກາພາສີນະຄອນຫລວງ, ບັນດາແຂວງ, ກອງລະ 1 ສະບັບ "ຈັດຕັ້ງປະຕິບັດ"
- ດ່ານພາສີສາກົນ, ດ່ານລະ 1 ສະບັບ "ຈັດຕັ້ງປະຕິບັດ"
- ເກັບມ້ຽນສຳເນົາ 1 ສະບັບ